# ສະໜັບສະໜູນການເຊື່ອມສານ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດເຂົ້າໃນແຜນງານຂອງຂະແໜງການ ຢູ່ໃນ ສປປ ລາວ



| | |
|---|---|
| ເຂດໂຄງການ: | ສປປ ລາວ |
| ໄລຍະໂຄງການ: | ພະຈິກ 2022 - ສິງຫາ 2026 |
| ງົບປະມານໂຄງການ: | 1 ລ້ານ ໂດລາສະຫະລັດ |
| ຫົວຂໍ້: | ວຽກງານການປ່ຽນແປງດິນຟ້າອາກາດ |
| ລະຫັດໂຄງການ: | LA23 |

## ເນື້ອໃນໂຄງການໂດຍຫຍໍ້

ໂຄງການນີ້ສຸມໃສ່ການເຊື່ອມສານຂໍ້ມູນ ແລະ ຫຼັກການ ດ້ານຄວາມສ່ຽງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຂົ້າໃນ 3 ຂະແໜງການທີ່ເປັນບູລິມະສິດ ຂອງ ສປປ ລາວ ຄື: ກະສິກຳ ແລະ ປ່າໄມ້, ພັດທະນາຕົວເມືອງ ແລະ ຂົນສົ່ງ ແລະ ຊັບພະຍາກອນນໍ້າ. ໂຄງການຈະເສີມສ້າງຄວາມທົນທານໃນໄລຍະຍາວໃຫ້ແກ່ຂະແໜງການບູລິມະສິດ ໂດຍການສ້າງແຜນງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຂອງຂະແໜງການ. ການຈັດຕັ້ງປະຕິບັດໂຄງການໄດ້ຮັບການຊີ້ນຳຈາກ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ລັດຖະບານ ແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການຈາກ ສະຖາບັນການເຕີບໂຕສີຂຽວສາກົນ (GGGI) ປະຈຳ ສປປ ລາວ ແລະ ໄດ້ຮັບທຶນສະໜັບສະໜູນຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF).

## ຈຸດປະສົງຂອງໂຄງການ

- ເສີມສ້າງການຄຸ້ມຄອງບໍລິຫານ ແລະ ການປະສານງານລະຫວ່າງສະຖາບັນກ່ຽວກັບວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ
- ເສີມສ້າງຖານຂໍ້ມູນພື້ນຖານໃນການອອກແບບແນວທາງ ເພື່ອແກ້ໄຂວຽກງານການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ
- ເພີ່ມໂອກາດໃນການສະໜອງທຶນເຂົ້າໃນວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

## ແນວທາງຍຸດທະສາດ

- **ເສີມສ້າງຄວາມອາດສາມາດດ້ານການປັບຕົວ –** ສ້າງຂີດຄວາມອາດສາມາດ ແລະ ຝຶກອົບຮົມ ໃຫ້ແກ່ຄະນະວິຊາການ ແລະ ຄະນະປະສານງານໂຄງການຈາກພາກສ່ວນລັດຖະບານຂອງຂະແໜງບູລິມະສິດກ່ຽວກັບ ຫຼັກການ ແລະ ເຄື່ອງມືສຳຄັນຂອງວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.
- **ຍົກລະດັບການສ້າງແຜນງານໄລຍະຍາວ –** ສ້າງໂອກາດໃນການສ້າງແຜນງານໃນໄລຍະຍາວ ໂດຍສະເພາະໃນໄລຍະການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ X 2026-2030 ໂດຍການເຊື່ອມສານວຽກງານປັບຕົວເຂົ້າໃນແຜນງານຂອງຂະແໜງການ.
- **ການຜັນຂະຫຍາຍໄປສູ່ການຈັດຕັ້ງປະຕິບັດ –** ສະໜັບສະໜູນ ການຈັດຕັ້ງປະຕິບັດ ແລະ ການນຳໃຊ້ ເຕັກໂນໂລຊີ  ແລະ ແນວທາງການແກ້ໄຂ ທີ່ເປັນບູລິມະສິດ ໂດຍພັດທະນາບົດສະເໜີໂຄງການລົງທຶນເພື່ອການລະດົມທຶນເຂົ້າໃນວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

### ຄູ່ຮ່ວມພັດທະນາ

GREEN CLIMATE FUND



ພາບຊາວກະສິກອນກຳລັງເກັບຜັກກາດ
©duanghathai tana



ຊາວປະມົງກຳລັງຫາປາຢູ່ແມ່ນໍ້າຂອງ, ສປປ ລາວ
© Sutipond Somnam



ການສັນຈອນຢູ່ບໍລິເວນທາດດຳ, ນະຄອນຫຼວງວຽງຈັນ, ສປປ ລາວ
© Phuong D. Nguyen

# ການປະເມີນຄວາມສ່ຽງຄວາມບອບບາງດ້ານການປ່ຽນແປງດິນຟ້າອາກາດ

**ລັດຖະບານ ແຫ່ງ ສປປ ລາວ, ສະຖາບັນ GGGI ແລະ ພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ ກຳລັງດຳເນີນການປະເມີນຢ່າງລະອຽດ ກ່ຽວກັບຄວາມສ່ຽງຄວາມບອບບາງດ້ານການປ່ຽນແປງດິນຟ້າອາກາດ ສຳລັບຂະແໜງກະສິກຳ ແລະ ປ່າໄມ້, ພັດທະນາຕົວເມືອງ ແລະ ຂົນສົ່ງ ແລະ ຊັບພະຍາກອນນ້ຳ ຢູ່ໃນ ສປປ ລາວ.**

ວຽກງານນີ້ຈະຊ່ວຍໃຫ້ ລັດຖະບານ ສປປ ລາວ ແລະ GGGI ສາມາດກຳນົດວິທີການແກ້ໄຂ ແລະ ຫຼຸດຜ່ອນຄວາມສ່ຽງ ໂດຍອີງໃສ່ຫຼັກຖານເປັນພື້ນຖານ, ນຳໃຊ້ເຕັກໂນໂລຊີ ແລະ ແນວທາງຕ່າງໆ ເພື່ອເພີ່ມທະວີຄວາມສາມາດໃນການປັບຕົວ ແລະ ຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດຂອງຂະແໜງການ. ວຽກງານນນີ້ ຄາດວ່າຈະຊ່ວຍສະໜັບສະໜູນ ແລະ ສ້າງຄວາມທົນທານໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນ ສປປ ລາວ ໃຫ້ແກ່ ຄອບຄົວ, ຊຸມຊົນ ແລະ ຫົວໜ່ວຍທຸລະກິດ ໃນໄລຍະຍາວ.



ເຮືອນຊົງລາວແບບຍົກພື້ນຊ່ວຍໃຫ້ປະຊາຊົນຫຼີກລ່ຽງບັນຫານ້ຳຖ້ວມ, ນະຄອນຫຼວງວຽງຈັນ, ສປປ ລາວ
© GGGI Lao PDR

## ສະພາບການ ແລະ ຄວາມເປັນມາ

ໃນປີ 2020, ລັດຖະບານ ແຫ່ງ ສປປ ລາວ ໄດ້ປັບປຸງ ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ເຊິ່ງລວມມີບັນດານະໂຍບາຍ ແລະ ໂຄງການທີ່ເປັນບຸລິມະສິດ ເພື່ອຊ່ວຍຮັບມືກັບການປ່ຽນແປງຂອງດິນຟ້າອາກາດ. ໃນນັ້ນ, ລັດຖະບານຍັງໃຫ້ບຸລິມະສິດໃນການເພີ່ມທະວີຄວາມສາມາດໃນການປັບຕົວຂອງຂະແໜງການທີ່ສຳຄັນ ຄື: ຂະແໜງກະສິກຳ ແລະ ປ່າໄມ້, ພັດທະນາຕົວເມືອງ ແລະ ຂົນສົ່ງ ແລະ ຊັບພະຍາກອນນ້ຳ. ນອກຈາກນັ້ນ, ແຜນງານແຫ່ງຊາດການປັບຕົວເຂົ້າກັບການປ່ຽຍນແປງດິນຟ້າອາກາດ (NAP) ຂອງ ສປປ ລາວ ກໍ່ໄດ້ວາງບຸລິມະສິດທີ່ສາຄັນສຳລັບຂະແໜງການເຫຼົ່ານີ້ໄວ້ເຊັ່ນດຽວກັນ.



ຊາວກະສິກອນແບກກ້າໄປປູກຢູ່ໃນນາເຂົ້າ ຢູ່ ສປປ ລາວ
© SantiPhotoSS

ໃນ ສປປ ລາວ, ຂະແໜງການເຫຼົ່ານີ້ໄດ້ສົ່ງຜົນກະທົບຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນຫຼາຍລ້ານຄົນ, ແຕ່ຄວາມຄືບໜ້າຂອງວຽກງານການປັບຕົວຍັງຊັກຊ້າ. ສິ່ງທ້າທາຍຕົ້ນຕໍລວມມີ:

- **ແຮງງານຂອງ ສປປ ລາວ ປະມານ 76% ປະກອບອາຊີບກ່ຽວກັບກະສິກຳ** – ເມື່ອເກີດໄພແຫ້ງແລ້ງ, ນ້ຳຖ້ວມ ຫຼື ໄພພິບັດອື່ນໆ, ຄອບຄົວຊາວກະສິກອນໃນທົ່ວປະເທດມັກຈະປະສົບກັບຜົນກະທົບຢ່າງຮຸນແຮງ. ການຊອກຫາໂອກາດທີ່ມີສ່ວນຮ່ວມ ແລະ ຍືນຍົງ ເພື່ອຄຸ້ມຄອງຄວາມສ່ຽງດ້ານການປ່ຽນແປງດິນຟ້າອາກາດພາຍໃນຂະແໜງການນີ້ໃຫ້ດີຂຶ້ນ ແມ່ນມີຄວາມຈຳເປັນອັນຮີບດ່ວນ.
- **ສປປ ລາວ ກຳລັງຫັນເປັນຕົວເມືອງໂດຍສະເພາະ ນະຄອນຫຼວງວຽງຈັນ ແມ່ນກຳລັງຂະຫຍາຍຕົວຢ່າງໄວວາ** – ໂຄງລ່າງພື້ນຖານຂອງຕົວເມືອງໄດ້ແກ່ ການຄຸ້ມຄອງສິ່ງເສດເຫຼືອ, ການຄົມມະນາຄົມ ຂົນສົ່ງ, ສຸຂະພິບານ ແລະ ລະບົບພະລັງງານ ຕ້ອງໄດ້ຮັບການຍົກລະດັບ ແລະ ປັບປຸງ ເພື່ອຮັບປະກັນວ່າສິ່ງອຳນວຍຄວາມສະດວກເຫຼົ່ານີ້ສາມາດດຳເນີນງານໄດ້ຢ່າງຕໍ່ເນື່ອງ ເຖິງແມ່ນວ່າຈະຢູ່ໃນສະພາບອາກາດທີ່ຮຸນແຮງ.
- **ສປປ ລາວ ເປັນປະເທດທີ່ມີແມ່ນ້ຳຫຼາຍສາຍ** – ແມ່ນ້ຳຂອງ ເປັນແມ່ນ້ຳສາຍຫຼັກ ທີ່ມີ 14 ແມ່ນ້ຳສາຂາໄຫຼມາປ່ອງໃສ່ ເຊິ່ງມີບົດບາດສຳຄັນໃນການຜະລິດໄຟຟ້າພະລັງງານນ້ຳ, ຊົນລະປະທານ ສຳລັບການກະສິກຳ ແລະ ນ້ຳດື່ມ, ແລະ ອື່ນໆ. ການຄຸ້ມຄອງຊັບພະຍາກອນແມ່ນ້ຳເຫຼົ່ານີ້ ແລະ ແມ່ນ້ຳສາຍອື່ນໆ ໃນໄລຍະຍາວ ຮຽກຮ້ອງໃຫ້ມີການສ້າງຄວາມເຂົ້າໃຈຢ່າງພຽງພໍກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບທີ່ອາດເກີດຂຶ້ນ.

## ຄາດຄະເນຜົນໄດ້ຮັບ ແລະ ໝາກຜົນຂອງໂຄງການ

ເພື່ອເພີ່ມຂີດຄວາມສາມາດຂອງ ສປປ ລາວ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ໂຄງການນີ້ໄດ້ສະໜັບສະໜູນວຽກງານການສ້າງແຜນງານປັບຕົວຢ່າງຮອບດ້ານ ລວມມີການຝຶກອົບຮົມໃຫ້ແກ່ພະນັກງານລັດ, ດຳເນີນການປະເມີນຄວາມບອບບາງຂອງຂະແໜງການ, ພັດທະນາແຜນງານປັບຕົວຂອງຂະແໜງການ ແລະ ສ້າງໂຄງການລົງທຶນສຳລັບວຽກງານປັບຕົວ.

**ພະນັກງານລັດຖະບານ 30 ທ່ານ**
ມີຄວາມອາດສາມາດດ້ານວຽກງານການປັບຕົວເພີ່ມຂຶ້ນ

**ຜູ້ມີສ່ວນຮ່ວມສ້າງນະໂຍບາຍ 100 ທ່ານ**
ມີສ່ວນຮ່ວມໃນການເກັບຂໍ້ມູນການປະເມີນຄວາມສ່ຽງຄວາມບອບບາງ

**80 ລ້ານໂດລາສະຫະລັດ**
ສາມາດເຂົ້າເຖິງໄດ້ສຳລັບວຽກງານປັບຕົວ

**2 ໂຄງການລົງທຶນ**
ຖືກອອກແບບເພື່ອສະໜອງໃຫ້ເຕັກໂນໂລຊີດ້ານການປັບຕົວ

**3 ແຜນງານຂອງຂະແໜງການ**
ໄດ້ເສີມສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ



ທົ່ງນາ ຢູ່ ສປປ ລາວ
© Nakornthai

**GGGI ປະຈຳ ສປປ ລາວ**
ກົມແຜນການ, ກະຊວງການເງິນ,
ຖະໜົນສຸພານຸວົງ, ນະຄອນຫຼວງວຽງຈັນ, ສປປ ລາວ
laos@gggi.org

**ສຳນັກງານໃຫຍ່ GGGI**
ຕຶກ Jeongdong ຊັ້ນ 19F, 21-15 Jeongdong-gil Jung-gu,
ນະຄອນຫຼວງໂຊລ, ສ. ເກົາຫຼີ
communications@gggi.org